# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 20 ກໍຣະກະດາ 2008 (07-20-2008)

## <u>ຈະມີຫຍັງເກີດຂຶ້ນເມື່ອພຣະຄຣິດສະເດັດກັບມາ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ພຣະນິມິດ 19 : 6-9, 11-16, 19-21

**<u>ຄໍາຖາມແຫ່ງຊີວິດ:</u>** ພຣະເຢຊູຈະເຮັດຫຍັງແດ່ເມື່ອເວລາພຣະອົງສະເດັດກັບມາ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ເມື່ອພຣະເຢຊູຄຣິດສະເດັດກັບມາພຣະອົງຈະທ້ອນໂຮມເອົາໄພ່ພົນຂອງພຣະອົງ, ນໍາເອົາຊັຍຊະນະຕໍ່ໂລກແລະກໍາຈັດຜູ້ທີ່ຕໍ່ຕ້ານພຣະຄຣິດ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ໃນບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ດໍາເນີນຊີວິດທີ່ມີຄວາມຫວັງແລະຄວາມຄິດເຣື່ອງວັນສຸດທ້າຍຢູ່ໃນໃຈໂດຍ...

* ມີຄວາມຊົມຊື່ນຍິນດີໃນຄວາມສໍາເຣັດຂອງພຣະເຢຊູຄຣິດໃນເວລາພຣະອົງສະເດັດກັບມາ.
* ໃຫ້ເຮົາເລືອກເອົາເສັ້ນທາງການດໍາຣົງຊີວິດອັນທີ່ມີຊັຍຊະນະຕໍ່ຄວາມບາບໃນເວລາເຮົາລໍຄອຍຖ້າການສະເດັດກັບມາຂອງພຣະເຢຊູຄຣິດ.

ດ້ວຍການທ້ອນໂຮມເງິນແຕ່ເລັກຫນ້ອຍໄປ ລາວໄດ້ເຮັດໃຫ້ຄູ່ຮັກຂອງລາວໄດ້ເຫັນແຫວນຫມັ້ນດ້ວຍຄວາມຕື່ນເຕັ້ນ ນາງໄດ້ເວົ້າວ່າຖືກຕ້ອງການກະກຽມລ່ວງຫນ້າມັນເຮັດໃຫ້ເຕີບໃຫຍ່ຂຶ້ນແຕ່ລະມື້ລະວັນ. ງານວິວາເຫມືອນກັບວ່າຈະບໍ່ມາຮອດຈັກເທື່ອແລະໃນທີ່ສຸດກໍມາເຖິງຢ່າງໃດກໍດີ. ງານວິວານັ້ນກໍເກີດຂຶ້ນເກີນຄວາມຄາດຫມາຍໄວ້. ໃນເວລາເລີ້ມຕົ້ນໃນຊີວິດຝ່າຍຈິດວິນຍານຄືຊີວິດທີ່ລໍຖ້າການສະເດັດກັບມາຂອງອົງພຣະເຢຊູຄຣິດ. ຫຼາຍໆ ພັນປີທີ່ຜ່ານມາເຫມືອນໆກັບວ່າຄວາມຫວັງຍັງຢູ່ຫ່າງໄກ ແຕ່ເຊື່ອແນ່ວ່າວັນນັ້ນມັນຕ້ອງເກີດຂຶ້ນແນ່ນອນ.

ບົດຮຽນນີ້ຈະຊ່ວຍໃຫ້ໄພ່ພົນຂອງພຣະເຈົ້າມີຄວາມຊົມຊື່ນຍິນດີກັບການທີ່ເຮົາເລືອກການດໍາລົງຊີວິດທີ່ມີຊັຍຊະນະຕໍ່ຄວາມບາບໃນເວລາລໍຄອຍການສະເດັດກັບມາຂອງພຣະເຢຊູຄຣິດ.

## <u>ສຶກສາພຣະຄັມພີ</u>

1. **<u>ທວງເອົາຄືນ</u>**: (ພຣະນິມິດ 19:6-9)

ບົດຮຽນນີ້ໄດ້ສະແດງເຖິງຄວາມສໍາຄັນສອງຢ່າງ. <u>ນຶ່ງ</u> ການສະຖາປະນາການຄອງຣາດຂອງພຣະອົງ ໄດ້ມີສຽງດັງອອກມາຈາກພຣະຣາຊບັນລັງຂອງພຣະອົງຢ່າງກະທັນຫັນເຫມືອນດັງສຽງຟ້າຮ້ອງ ແລະສຽງນັ້ນກໍແມ່ນເກີດມາຈາກການສະຖາປະນາຂອງພຣະອົງເອງ. ການຄຸ້ມຄອງຂອງພຣະເຈົ້າມີຢູ່ເປັນນິດ, ຜ່ານໄປເຖິງພຣະວິນຍານບໍຣິສຸດຂອງພຣະເຈົ້າ ແມ່ນເກີດຂຶ້ນຕາມການບັນທຶກຂອງພຣະຄັມພີ ແລະຈະພົບເຫັນໄດ້ໃນທຸກຫົນທຸກແຫ່ງຂອງໂລກນີ້.

ໄພ່ພົນຂອງພຣະເຈົ້າຕ້ອງມີຄວາມຊົມຊື່ນຍິນດີກັບການສັຣເສີນພຣະນາມຂອງພຣະອົງ. ພຣະເຈົ້າຜູ້ທີ່ປົກຄອງນັ້ນແມ່ນພຣະເຈົ້າຂອງພວກເຮົາໃນພຣະເຢຊູຄຣິດ, ພວກເຮົາມີການພົວພັນພິເສດກັບພຣະຄຣິດຍ້ອນການຊົງໄຖ່ໄວ້ຂອງພຣະອົງ ຜູ້ຊົງເປັນປະມຸກໃນໃຈຂອງເຮົາຈະເປັນຜູ້ປົກຄອງໃນໂລກນີ້ອີກດ້ວຍ. ຄຣິສຕຽນຄວນຈະໄດ້ຮັບການຫນູນໃຈໃຫ້ມີຄວາມເຊື່ອຫມັ້ນເພື່ອການສະເດັດກັບມາຂອງພຣະເຢຊູຄຣິດ. <u>ສອງ</u> ພວກເຮົາຈະມີຄວາມຊົມຊື່ນຍິນດີເພາະ

ເປັນເວລາຂອງພຣະເມສານ້ອຍຈະມາຮັບເອົາເຈົ້າສາວຂອງພຣະອົງ. ຄວາມລອດພົ້ນຂອງຜູ້ທີ່ເຊື່ອໃນພຣະອົງນັ້ນຈະຕ້ອງປາກົດຢ່າງແນ່ນອນ. ໃນສມັຍພຣະຄັມພີເດີມການແຕ່ງງານແມ່ນປະກອບຂຶ້ນດ້ວຍສອງປະການທີ່ສຳຄັນຄື: 1 ການໝັ້ນໝາຍໃນເວລາຂອງການໝັ້ນນັ້ນທັງສອງຝ່າຍຈະຕ້ອງເຊື່ອໝັ້ນວ່າຈະແຕ່ງງານກັນ. ແລະການວິວານັ້ນຈະຕ້ອງສົມບູນຂຶ້ນໄດ້ຕໍ່ເມື່ອທັງສອງໄດ້ເຂົ້າພິທີແຕ່ງງານ. ເປັນເໝືອນກັບວ່າ ກາຍຂອງຜູ້ເຊື່ອນັ້ນເປັນເຈົ້າສາວຂອງພຣະຄຣິດ. ພວກເຂົາລໍຖ້າການເຂົ້າສູ່ງານວິວາຂອງພຣະເມສານ້ອຍດ້ວຍຄວາມບໍຣິສຸດແລະມີສິ່ງໃດຈະກີດກັນໄດ້. ໝາຍຄວາມວ່າເຈົ້າສາວນັ້ນຈະຕ້ອງສວມຊຸດແຕ່ງງານທີ່ເປັນສີຂາວບໍຣິສຸດນັ້ນໝາຍເຖິງຄວາມຊອບທັມຂອງໄພ່ພົນຂອງພຣະອົງ. (ເອເຟໂຊ2:10) ເພາະວ່າເຮົາທັງຫລາຍເປັນສີພຣະຫັດຂອງພຣະອົງທີ່ສ້າງຂຶ້ນໃນພຣະເຢຄຣິດໃຫ້ປະກອບການດີ ຊຶ່ງພຣະເຈົ້າໄດ້ຊົງຈັດຕຽມລ່ວງໜ້າໄວ້ກ່ອນເພື່ອໃຫ້ເຮົາທັງຫລາຍປະຕິບັດຕາມ. ຜູ້ທີ່ຮັບໃຊ້ພຣະເຈົ້າແມ່ນຍ້ອນຄວາມຮູ້ຈັກ ພຣະຄຸນແລະຄວາມຮັກຂອງພຣະເຈົ້າ. ເປັນເໝືອນຄວາມຊອບທັມແລະການດຳລົງຊີວິດທີ່ມີໄຊຊະນະນັ້ນ ເປັນເໝືອນເຄື່ອງນຸ່ງຫົ່ມຂອງຜູ້ທີ່ເຊື່ອທີ່ຈະນຸ່ງເຂົ້າໃນງານວິວາຂອງພຣະຄຣິດ. ຄວາມຈິງແລ້ວການປະຕິບັດແລະຄວາມເຊື່ອກໍຄຽງຄູ່ກັນໄປ (ໂຣມ 5:18-19) ການຕັດສິນພິພາກສານັ້ນແມ່ນໝາຍເຖິງຄວາມຖືກຕ້ອງຫຼືຄວາມຊອບທັມ. ຜູ້ທີ່ມີຄວາມຊອບທັມໂດຍການຮູ້ຈັກພຣະຄຸນຂອງພຣະເຈົ້າແມ່ນມີຄວາມເຕີບໃຫຍ່ຂຶ້ນໂດຍການດຳຣົງຊີວິດໃນທາງຊອບທັມ ແລະຄວາມຊອບທັມທີ່ສົມບູນນັ້ນແມ່ນມີຢູ່ໃນອົງພຣະເຢຄຣິດ. ເມື່ອເຈົ້າສາວໄດ້ເຂົ້າພິທີແຕ່ງງານກັບພຣະເມສານ້ອຍນັ້ນ ລາວໄດ້ຮັບອະນຸຍາດໃຫ້ສ່ວມເຄື່ອງແຕ່ງງານອັນທີ່ເປັນສີຂາວບໍຣິສຸດປຽບເໝືອນຄວາມຊອບທັມທີ່ພຣະອົງຊົງຈັດຕຽມໄວ້ແລ້ວສຳຣັບງານແຕ່ງງານ.

ຜູ້ທີ່ຖືກເຊີນໄປໃນງານແຕ່ງງານກໍຈະໄດ້ຮັບພຣະພອນ "ຄຳວ່າ ພຣະພອນ" ນັ້ນມີຄວາມໝາຍວ່າ "ຄຸນຄວາມດີອັນສູງສົ່ງ" ຜົນຂອງຄວາມລອດພົ້ນຂອງອົງພຣະຄຣິດນັ້ນກໍໄດ້ເຂົ້າມາສູ່ກັບຜູ້ຄົນທີ່ມີສວນຮ່ວມໃນງານສົມຣົດ. ດັ່ງນັ້ນການສເລີມສລອງງານສົມຣົດນັ້ນໄດ້ເຮັດໃຫ້ພຣະຣັສມີຂອງພຣະເຈົ້າໄດ້ທຳລາຍ ຊາຕານ ແລະພັກພວກຂອງມັນ.

## ໒. <u>ໄດ້ຊັຍຊະນະ:</u> (ພຣະນິມິດ 19:11-16)

ກະສັດຂອງກະສັດທັງປວງແລະພຣະເຈົ້າຂອງພຣະທັງປວງ. ມີບົດເພງອັນເກົ່າແກ່ເຄີຍເຕືອນພວກເຮົາວ່າຈະເປັນຕອນເຊົ້າ ຕອນບ່າຍຫຼືຕອນກາງຄືນ ພຣະເຢຊູຈະສະເດັດກັບມາ ພ້ອມດ້ວຍສະງ່າຣາສີຂອງພຣະອົງ "ອາແມນ" ທ່ານໂຢຮັນໄດ້ພັນລະນາເຖິງການກັບມາຂອງພຣະເຢຊູຄຣິດທີ່ເປັນຜູ້ສັດຊື່ແລະທ່ຽງທັມ(ພຣະນິມິດ3:14) ພຣະເນດຂອງພຣະອົງຈະມີແສງຄ້າຍຄືກັບແປວໄຟ ມີຄວາມໝາຍວ່າບໍ່ມີສິ່ງໃດທີ່ຈະປິດບັງພຣະອົງໄດ້. ຜ້າຄຸມຂອງພຣະອົງເຕັມໄປດ້ວຍເລືອດທີ່ສະແດງເຖິງແກະທີ່ນຳມາບູຊາ. ບັດນີ້ພຣະອົງໄດ້ສະເດັດກັບມາເປັນຜູ້ປົກຄອງເໜືອກະສັດທັງປວງ. ຄຳສັນຍາຂອງເປໂຕໃນ (໒ ເປໂຕ 3:3-4) ເພິ່ນໄດ້ບອກວ່າໃນວັນສຸດທ້າຍ "ຄຳໝັ້ນສັນຍານັ້ນມັນຢູ່ໃສ" ສິ່ງທັງປວງກໍຍັງຢູ່ເໝືອນເດີມ" ສິ່ງເຫຼົ່ານັ້ນບໍ່ເປັນຄວາມຈິງ ທຸກສິ່ງທຸກຢ່າງມີການປ່ຽນແປງເລີ້ມແຕ່ສມັຍໂນອາໄດ້ສ້າງນາວາ ແລະບັດນີ້ການປ່ຽນແປງຄັ້ງໃຫຍ່ກຳລັງຈະມາເຖິງແລ້ວ. ພຣະເຢຊູຄຣິດຈະສະເດັດກັບມານັ້ນຄືກະສັດຂອງກະສັດທັງປວງ ແລະພຣະເຈົ້າຂອງພຣະທັງປວງ. ກອງທັບຂອງພຣະອົງ... ດາບແລະໄມ້ແສ້ເຫຼັກສະແດງໃຫ້ເຫັນ ເຖິງພຣະຣາຊກິດຂອງພຣະອົງໃນການຕັດສິນແລະປົກຄອງ. ນັກແຕ້ມຮູບພາບໄດ້ວາດພາບພຣະເຢຊູຄຣິດເປັນເໝືອນຜູ້ລ້ຽງແກະທີ່ອ່ອນນ້ອມຊຶ່ງກົງກັນຂ້າມກັບນິມິດຂອງທ່ານໂຢຮັນ, ຜູ້ປົກຄອງຜູ້ນີ້ບໍ່ແມ່ນຜູ້ລ້ຽງແກະທີ່ອ່ອນນ້ອມ ແຕ່ເພິ່ນຖືໄມ້ແສ້ເຫຼັກເໝືອນກັບບົດເພັງສັຣເສີນ ໒:9 ພຣະອົງບໍ່ໄດ້ມາໄຖ່ແຕ່ມາທຳລາຍ ແລະເປັນເຣື່ອງທີ່ບໍ່ໜ້າສົນໃຈສຳລັບຜູ້ໃດຜູ້ນຶ່ງ. ພຣະເຢຊູຄຣິດຈະສະເດັດກັບມາເໝືອນເປັນຜູ້ຕັດສິນ. ແລະພຣະອົງຈະຕັດສິນລົງໂທດດ້ວຍຄວາມຍຸດຕິທັມເໝືອນກັບໝາກອະງຸ່ນຖືກຢຽບເພື່ອເຮັດເຫຼົ້າອະງຸ່ນໃນສມັຍກ່ອນ. ກໍເໝືອນກັບພຣະຄຣິດຈະເຮັດກັບສັດຕຣູຂອງພຣະອົງດ້ວຍ. ບັນດາຜູ້ທີ່ບໍ່ຍອມຮັບເອົາຂ່າວປະເສີດຂອງພຣະອົງກໍຈະຮັບການລົງໂທດ ໃນສວັນພຣະອົງໄດ້ມີທະຫານຜູ້ທີ່ຄອຍປົວລະບັດພຣະອົງ. ແຕ່ພຣະອົງບໍ່ຕ້ອງການຊ່ວຍເຫຼືອຈາກທະຫານເຫຼົ່ານັ້ນ. ຖ້ອຍຄຳທີ່ພຣະອົງຊົງກ່າວມານັ້ນກໍເປັນເໝືອນດາບທີ່ແຫຼມຄົມແລະມີສິດອຳນາດ (ເອຊາຢາ 11:4) ໂດຍພຣະຄຳຂອງພຣະອົງສາມາດ

ປິ່ນປົວ, ຄືນມາຈາກຕາຍ ອະພັຍໂທດບາບ. ໃນເມື່ອພຣະອົງກັບມາພຣະອົງຈະທຳລາຍອານາຈັກຕ່າງໆດ້ວຍພຣະທັມຂອງພຣະອົງເອງແລະພວກເຂົາກໍຈະຖືກທຳລາຍ.

ເມື່ອພຣະອົງໄດ້ປາບສັດຕຣູຂອງພຣະອົງລົງແລ້ວ ພຣະອົງກໍຈະຊົງປົກຄອງ. ດັ່ງນັ້ນຜູ້ທີ່ເຊື່ອຄວນຈະໝູນໃຈຊື່ງກັນແລະກັນແລະເປັນພຣະຍານ ເພາະວ່າການພິພາກສາຂອງພຣະອົງນັ້ນແມ່ນທ່ຽງທັມ ດັ່ງນັ້ນຄຳເວົ້າແລະການກະທຳຂອງເຮົາກໍໃຫ້ເໝາະສົມກັບອົງພຣະເຢຊູຄຣິດຜູ້ເປັນພຣະເຈົ້າຂອງເຮົາ.

**3. ການທຳລາຍ:** (ພຣະນິມິດ 19:19-21)

ບໍ່ວ່າຈະມີເຫດອັນໃດອັນນຶ່ງເກີດກັບໄພ່ພົນຂອງພຣະເຈົ້າ ກໍຈະມີຜູ້ໃດຜູ້ນຶ່ງນັ້ນເຕືອນຈິດໃຈຂອງພວກເຂົາວ່າ ພຣະເຈົ້າຍັງຢູ່ນຳພວກເຂົາແລະພຣະອົງເອງກໍຍັງສະແດງຕົວເອງຂອງພຣະອົງບໍ່ວ່າເຫດໃດຈະເກີດຂື້ນພຣະອົງກໍຢູ່ກັບເຂົາແລະພ້ອມທີ່ຈະຊ່ວຍເຫຼືອເຂົາ. ໃນທາງກົງກັນຂ້າມ, ທ່ານໂຢຮັນໄດ້ເຫັນກະສັດທັງຫຼາຍຂອງແຜ່ນດິນໂລກ ພ້ອມກັບກອງທັບຂອງກະສັດເຫຼົ່ານັ້ນ. ມັນເປັນຄວາມຈິງພວກເຂົາພ້ອມທີຈະຕໍ່ສູ້ກັບພຣະອົງ ແລະກອງທັບຂອງພຣະອົງ. ຢູ່ໃນໂລກປະຈຸບັນຜູ້ຕິດຕາມພຣະຄຣິດແລະພຣະຄຣິດເອງກໍຍັງມີຄູ່ຕໍ່ສູ້. ມະນຸດ, ພຍາມານ ຊາຕານ, ແຕ່ວ່າການຄືນພຣະຊົນທີ່ບໍ່ເຄີຍມີມາກ່ອນນັ້ນໄດ້ເຮັດໃຫ້ມີຊັຍຊະນະຕໍ່ສັດຕູ. "ອາມາເຄໂດນ ເປັນພາສາເຮັບເຣີ"(ພຣະນິມິດ16:16) ຊຶ່ງເປັນບ່ອນຜີຖ່ອຍຮ້າຍໃຫ້ກະສັດທັງຫຼາຍມາຊຸມນຸມກັນ. Megiddo ເມືອງເກົ່າບູຮານເປັນເມືອງທີ່ບໍ່ມີຄວາມສງົບ. ເປັນເມືອງທີ່ຕັ້ງຢູ່ເທິງເນີນພູເມື່ອເບິ່ງໄປແບບຜືວເຜີນກໍຄ້າຍວ່າທັງສອງຟາກຂອງ "ເຈສີ" (Jezreel) ບາງຄັ້ງກໍຄືມີຄວາມນິຍົມຊົມຊອບ. ແຕ່ສະຖານທີ່ນີ້ກໍເປັນບ່ອນທີ່ເຮັດໃຫ້ເກີດການຕໍ່ສູ້, ດັ່ງທີ່ບັນທຶກໄວ້ໃນ ( ພຣະນິມິດ16:14 ) "ພຍາມານ "ໄດ້ດຳເນີນຄວາມດຸຮ້າຍຕໍ່ໄປ. ຜີຮ້າຍແລະຜູ້ທີ່ປະກາດພຣະທັມປອມ, ພວກເຂົາເບິ່ງຄືເປັນກະສັດທີ່ຍິ່ງໃຫຍ່ໃນແຜ່ນດິນໂລກທີ່ຕໍ່ສູ້ກັບອັນຄືນດີຂອງອົງພຣະຜູ້ເປັນເຈົ້າ. ເຂົາຄືກັບວ່າມີພລັງມະຫາສານ ນີ້ແມ່ນຮູບພາບຂອງທັງສອງກອງທັບ, ຝ່າຍນຶ່ງໄດ້ນຸ່ງເຄື່ອງຕຽມພ້ອມທີ່ຈະເຂົ້າສະຖານທີ່ຕໍ່ສູ້. ອີກຝ່າຍນຶ່ງນັກຮົບກໍມີການສົນລະວົນວຸ້ນວາຍແມ່ນອົງພຣະເຢຊູຄຣິດຜູ້ດຽວເທົ່ານັ້ນທີຈະມີຊັຍຊະນະ. ພຣະອົງໄດ້ຈັບເອົາພວກພຍາມານແລະບໍຣິວານຂອງມັນໂຍນລົງໃນບຶງໄຟນະຮົກ. ແປວໄຟອອກຈາກພຣະໂອດຂອງພຣະອົງກໍເຜົາຜານພວກເຂົາ. ມັນເປັນຄວາມຈິງທີ່ສະແດງໃຫ້ຮູ້ວ່າພຣະເຢຊູແມ່ນອົງພຣະຜູ້ເປັນເຈົ້າແລະເປັນຄວາມຈິງທີ່ພຣະອົງຈະສະເດັດກັບມາ. ເຫດການນີ້ເປັນພຽງປາກົດການຕົວຢ່າງພຽງເລັກນ້ອຍຂອງຊັຍຊະນະຕໍ່ຄວາມບາບ. ແຕ່ຫາທີ່ປຽບບໍ່ໃດກັບການກັບມາ ຄອງຣາດຂອງພຣະເຢຊູຄຣິດ. ໃນເວລານັ້ນ, ພວກເຮົາຄາດຄະເນເຖິງຄວາມເປັນຈິງທີ່ຈະປາກົດຂື້ນຄວາມ ບໍຣິບູນຂອງພຣະເຢຊູແລະ ຄວາມຖືກຕ້ອງທີ່ພຣະອົງຈະນຳມາ. ໂດຍປາສຈາກການສະແດງເຖິງການສະເດັດກັບມາຂອງພຣະເຢຊູຄຣິດແລະການພິພາກສາ. ບາງຂໍ້ຄວາມທີ່ເປັນໝາຍສຳຄັນແມ່ນການສະແດງເຖິງການລົງໂທດຂອງພຍາມານແລະບໍຣິວານຂອງມັນ. ພຍາມານເຖິງຈະມີອຳນາດແລະເລ້ຫລ້ຽມອັນຊົ່ວຮ້າຍຕໍ່ພຣະເຢຊູ. ພຣະທັມຄຳສອນຂອງພຣະເຢຊູແລະອານາຈັກຂອງພຣະອົງ. ພຣະອົງໄດ້ແຍກຜູ້ທີ່ເຊື່ອແລະບໍ່ເຊື່ອອອກຈາກກັນ ສ່ວນຜູ້ທີ່ເຊື່ອນັ້ນກໍແຍກໄວ້ຕ່າງຫາກເພື່ອສຳລັບນະມັສການພຣະອົງ. ສ່ວນພວກທີ່ບໍ່ເຊື່ອນັ້ນພຣະອົງໄດ້ໂຍນລົງບຶງໄຟນະຮົກ.

ຍັງເປັນໂອກາດດີສຳລັບພວກເຮົາທີ່ຈະເລືອກ. ເຮົາຈະເລືອກເອົາພຣະເຢຊູ ຫຼື ຈະເລືອກເປັນຜູ້ຕໍ່ສູ້ພຣະອົງ. ໃນການດຳລົງຢູ່ທຸກວັນນີ້ເປັນການດີທີ່ພວກເຮົາຈະຕັດສິນໃຈ ພວກເຮົາຮູ້ຈັກ ເຮົາຄວນເປັນຂອງພຣະອົງ ຜູ້ທີ່ຍອມຮັບພຍາມານກໍຖືກໝາຍໄວ້ໃນຄວາມຈິບຫາຍ. ອັຄສາວົກເປໂຕ "ຍອມຮັບເອົາຕຣາປະທັບຂອງພຣະເຢຊູ" (ຄາລາເຕັຽ 6:17) ພວກເຮົາເຄີຍອມຮັບເອົາອົງພຣະເຢຊູຄຣິດແລ້ວບໍ? ຖ້າຫາກວ່າເຮົາມີຄວາມສັມພັນພິເສດກັບພຣະອົງ. ທາງເລືອກກໍມີສອງຢ່າງຄື, ເລືອກອົງພຣະເຢຊູຄຣິດ ຫຼື ຈະເປັນຜູ້ຕໍ່ສູ້ພຣະຄຣິດ ໃນນາທີສຸດທ້າຍຈະບໍ່ມີໂອກາດເລີຍ.

## ບົດຣຽນໃນຊີວິດ

ບັນດາຜູ້ທີ່ເຊື່ອໄດ້ລໍຄອຍການສະເດັດກັບມາຂອງອົງພຣະເຢຊູຄຣິດຕາມຄຳສັນຍາ. ເມື່ອພຣະອົງກັບມາພຣະ

ອົງຈະທວງເອົາໄພ່ພົນຂອງພຣະອົງ, ມີຊັຍຊະນະຕໍ່ໂລກ, ແລະທຳລາຍຜູ້ຕໍ່ສູ້ພຣະຄຣິດ, ເຖິງແມ່ນວ່າພວກເຮົາຈະບໍ່ຮູ້ແນ່ນອນວ່າອີກດົນປານໃດ ຜູ້ທີ່ເຊື່ອສາມາດດຳຣົງຊີວິດດ້ວຍຄວາມເຊື່ອໝັ້ນວ່າພຣະອົງຈະສະເດັດກັບມາ. ຄຣິສຕຽນມີຄວາມຫວັງອັນຍິ່ງໃຫຍ່ໃນອະນາຄົດແລະມີຊີວິດຢູ່ໂດຍແນໃສ່ເບື້ອງເທິງ, ແນມໄປທາງໜ້າ.

ມີຫລັກການຫລາຍຢ່າງທີ່ສາມາດນຳມາສູ່ຈິດໃຈ, ຄວາມຄິດ, ແລະຊີວິດຂອງບັນດາຜູ້ທີ່ເຊື່ອເພື່ອກະກຽມເຂົາເຈົ້າໃຫ້ລໍຄອຍການສະເດັດກັບມາຂອງພຣະຄຣິດ.

- ເບິ່ງ = ເຝົ້າເບິ່ງແລະຄອງຄອຍການປາກົດຂອງພຣະອົງ
- ຮຽນ = ສຶກສາພຣະຄຳຂອງພຣະເຈົ້າເພື່ອເສີມສ້າງຕົນເອງແລະມີຄວາມຫວັງໃນວັນພຣະອົງສະເດັດກັບມາ
- ຮັກ = ຮັກແລະເປັນຫ່ວງຄົນອື່ນ ເພື່ອແນ່ໃຈວ່າເຂົາເຈົ້າມີໂອກາດໄດ້ຕອບສນອງຕໍ່ເຣື່ອງຂອງພຣະຄຣິດ
- ເຮັດວຽກ = ຮັບໃຊ້ພຣະຄຣິດຢ່າງສັດຊື່ ຈຶ່ງຮູ້ວ່າທ່ານຈະໄດ້ທີ່ມຄວາມຊອບທັມເມື່ອທ່ານໄປໂຮມກັນໃນວັນທີ່ພຣະອົງຊົງປາກົດ.
- ເພິ່ງອາສັຍ = ເພິ່ງພາໃນພຣະອົງແລະຣິດອຳນາດຂອງພຣະອົງໃນການດຳຣົງຊີວິດແຕ່ລະວັນ ປູກຝັງແລະປະຕິບັດຄວາມເຊື່ອເພື່ອຊ່ວຍຊ້ວານຊູທ່ານຈົນກວ່າພຣະອົງສະເດັດມາຫາທ່ານ
- ຜູກມັດໄວ້ = ໃຫ້ພຣະເຈົ້າແລະພຣະຄຳຂອງພຣະອົງຜູກມັດທ່ານໄວ້ຢ່າງໝັ້ນໃຈວ່າພຣະອົງຈະກະທຳຢ່າງໃດໃນວັນພຣະອົງສະເດັດກັບມາ

ຈູດີ ຕ້ອງການຢາກຮູ້ຕື່ມກ່ຽວກັບຄວາມເຊື່ອຂອງລາວ,ໂດຍສະເພາະແລ້ວກ່ຽວກັບອະນາຄົດຂອງລາວ. ຫລັງຈາກໄດ້ເບິ່ງລາຍການທາງທີວີຂອງ ( Billy Graham ) . ລາວຕ້ອງການປຶ້ມອ່ານກ່ຽວກັບການສະເດັດກັບມາຂອງອົງພຣະເຢຊູຄຣິດ. ລາວໄດ້ອ່ານແລະສຶກສາໃນປຶ້ມນີ້ແລະໄດ້ຄົ້ນຄວ້າໃນພຣະຄັມພີ. ຄວາມເຊື່ອຂອງລາວໄດ້ເລີ້ມເຕີບໃຫຍ່ຂື້ນແລະລາວໄດ້ເລີ້ມຮູ້ວ່າພຣະເຢຊູຄຣິດກະທຳຢ່າງໃດໃນຊີວິດຂອງພຣະອົງ ການວາຍພຣະຊົນຂອງພຣະອົງເທິງ ໄມ້ກາງແຂນພຣະອົງຮູ້ແນ່ນອນພຣະອົງຈະຊົງເປັນຄືນມາຈາກຕາຍ. ທຸກວັນນີ້ນາງລໍຖ້າພຣະອົງກັບຄືນມາແລະນາງດຳຣົງຊີວິດດ້ວຍການຈົດຈໍ່ຕໍ່ການສະເດັດກັບມາຂອງພຣະເຢຊູຄຣິດ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປແລະຮຽບຮຽງ ໂດຍ SS/VS